# ກົດໝາຍວ່າດ້ວຍສິດທິດ້ານການເບິ່ງແຍງຢູ່ເຮືອນຂອງຣັຖມິນນີໂຊຕາ

**ຕາມຣັຖບັນຍັດຂອງຣັຖມິນນີໂຊຕາ, ມາດຕາ144A.44.**

**ສິດທິເຫຼົ່ານີ້ກ່ຽວຂ້ອງກັບຜູ້ບໍລິໂພກທີ່ຮັບເອົາການບໍລິການເບິ່ງແຍງດູແລຈາກຜູ້ໃຫ້ບໍລິການເບິ່ງແຍງດູແລຢູ່ເຮືອນທີ່ມີໃບອະນຸຍາດເທົ່ານັ້ນ.**

## ຖະແຫຼງການວ່າດ້ວຍສິດທິ

ບຸກຄົນທີ່ໄດ້ຮັບບໍລິການການເບິ່ງແຍງຢູ່ເຮືອນມີສິດທິເຫຼົ່ານີ້:

1. ສິດທິທີ່ຈະໄດ້ຮັບຂໍ້ມູນເປັນລາຍລັກອັກສອນກ່ຽວກັບສິດທິຕ່າງໆ ກ່ອນການຮັບການບໍລິການຕ່າງໆ, ລວມເຖິງສິ່ງທີ່ຕ້ອງເຮັດຖ້າຫາກຖືກລະເມີດສິດທິ.

2. ສິດທິທີ່ຈະໄດ້ຮັບການເບິ່ງແຍງແລະການບໍລິການຕ່າງໆສອດຄ່ອງກັບແຜນການທີ່ເໝາະສົມແລະທັນກັບສະພາບການ, ແລະພາຍໃຕ້ການເບິ່ງແຍງສຸຂະພາບທີ່ໄດ້ຮັບການຍອມຮັບ, ມາດຕະຖານທາງການແພດ ຫຼືການດູແລພະຍາບານ, ເຂົ້າຮ່ວມຢ່າງກະຕືລືລົ້ນໃນການພັດທະນາ, ດັດແປງ, ແລະປະເມີນຜົນແຜນການແລະການບໍລິການຕ່າງໆ.

3. ມີສິດທີ່ຈະໄດ້ຮັບການບອກກ່າວກ່ອນທີ່ຈະຮັບການບໍລິການຕ່າງໆ ປະເພດແລະກົດລະບຽບຂອງເຈົ້າໜ້າທີ່ຜູ້ທີ່ຈະໃຫ້ການບໍລິການ, ຄວາມຖີ່ຂອງການກວດກາສຸຂະພາບທີ່ສະເໜີໃຫ້, ທາງເລືອກອື່ນໆ ທີ່ມີໃຫ້ເພື່ອແກ້ໄຂບັນຫາຄວາມຕ້ອງການໃນການເບິ່ງແຍງຢູ່ເຮືອນ, ແລະຜົນຕາມມາທີ່ເປັນໄປໄດ້ຂອງການປະຕິເສດການບໍລິການເຫຼົ່ານີ້.

4. ສິດທິທີ່ຈະໄດ້ຮັບການບອກກ່າວລ່ວງໜ້າເຖິງຄຳແນະນຳການປ່ຽນແປງໃດໆ ໂດຍຜູ້ໃຫ້ບໍລິການໃນແຜນການບໍລິການ ແລະເພື່ອເຂົ້າຮ່ວມຢ່າງກະຕືລືລົ້ນໃນການຕັດສິນໃຈໃດໆກ່ຽວກັບການປ່ຽນແປງແຜນການບໍລິການ.

5. ສິດທິທີ່ຈະປະຕິເສດການບໍລິການຫຼືການປິ່ນປົວ.

6. ສິດທິທີ່ຈະຮູ້, ກ່ອນການຮັບບໍລິການຫຼືລະຫວ່າງການກວດກາເບິ່ງແຍງຄັ້ງທຳອິດ, ຂໍ້ຈຳກັດໃດໆຕໍ່ການບໍລິການທີ່ມີໃຫ້ຈາກຜູ້ໃຫ້ບໍລິການເບິ່ງແຍງຢູ່ເຮືອນ.

7. ສິດທິທີ່ຈະໄດ້ຮັບການບອກກ່າວກ່ອນເລີ່ມໃຫ້ບໍລິການສິ່ງທີ່ຜູ້ໃຫ້ບໍລິການຄິດຄ່າບໍລິການ; ມີການຄາດໝາຍການຈ່າຍເງິນປະມານເທົ່າໃດຈາກປະກັນພັຍສຸຂະພາບ, ໂຄງການສາທາລະນະ, ຫຼືແຫຼ່ງຊ່ວຍເຫຼືອອື່ນໆ, ຖ້າວ່າຮູ້; ແລະຜູ້ຮັບບໍລິການຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຫຍັງແດ່.

8. ສິດທິທີ່ຈະຮູ້ວ່າມີບໍລິການອື່ນໆອີກໃນຊຸມຊົນ, ລວມເຖິງການບໍລິການເບິ່ງແຍງຢູ່ເຮືອນອື່ນໆແລະຜູ້ໃຫ້ບໍລິການຕ່າງໆ, ແລະມີສິດທີ່ຈະຮູ້ວ່າຈະໄປຊອກຫາຂໍ້ມູນໄດ້ຈາກບ່ອນໃດກ່ຽວກັບການບໍລິການເຫຼົ່ານີ້.

9.ສິດທິທີ່ຈະເລືອກຢ່າງເປັນອິດສະຫຼະໃນກຸ່ມຜູ້ໃຫ້ບໍລິການຕ່າງໆທີ່ມີຢູ່ແລະມີສິດທີ່ຈະປ່ຽນຜູ້ໃຫ້ບໍລິການຫຼັງຈາກໄດ້ເລີ້ມຮັບບໍລິການໄປແລ້ວ, ພາຍໃນຂໍ້ຈຳກັດຂອງປະກັນພັຍສຸຂະພາບ, ປະກັນພັຍສຸຂະພາບໄລຍະຍາວ, ການຊ່ວຍເຫຼືອດ້ານການແພດ, ຫຼືໂຄງການຊ່ວຍເຫຼືອສຸຂະພາບອື່ນໆ.

10. ມີສິດທີ່ຈະຂໍໃຫ້ເກັບຂໍ້ມູນສ່ວນຕົວ, ຂໍ້ມູນດ້ານການເງິນ, ແລະຂໍ້ມູນດ້ານການປິ່ນປົວເປັນຄວາມລັບສ່ວນຕົວ, ແລະໄດ້ຮັບການບອກກ່າວເຖິງນະໂຍບາຍແລະຂັ້ນຕອນການດຳເນີນການຂອງຜູ້ໃຫ້ບໍລິການໃນເລື້ອງການເປີດເຜີຍຂໍ້ມູນດັ່ງກ່າວ.

11. ມີສິດທີ່ຈະເຂົ້າເຖິງປະຫວັດບັນທຶກຂອງຕົນເອງແລະຂໍ້ມູນທີ່ເປັນລາຍລັກອັກສອນຈາກບັນທຶກຕ່າງໆເຫຼົ່ານັ້ນໂດຍສອດຄ່ອງກັບມາດຕາ 144.291ຫາ 144.298.

12. ສິດທິທີ່ຈະໄດ້ຮັບການບໍລິການຈາກບຸກຄົນທີ່ໄດ້ຮັບການຝຶກຫັດມາຢ່າງເໝາະສົມແລະມີຄວາມສາມາດໃນການປະຕິບັດໜ້າທີ່ຂອງເຂົາເຈົ້າ.

13. ສິດທິທີ່ຈະໄດ້ຮັບການປະຕິບັດຕໍ່ດ້ວຍຄວາມເອື້ອເຟື້ອແລະຄວາມເຄົາລົບ, ແລະມີສິດທີ່ຈະໄດ້ຮັບການດູແລຊັບສິນສ່ວນຕົວຂອງຕົນດ້ວຍຄວາມເຄົາລົບ.

14. ສິດທິທີ່ຈະເປັນອິດສະຫຼະຈາກການຖືກຂົ່ມເຫັງທາງຮ່າງກາຍແລະຄຳເວົ້າ, ການປະລະ, ການເອົາປຽບທາງການເງິນ, ແລະການປະຕິບັດທີ່ບໍ່ດີທັງໝົດທີ່ຢູ່ພາຍໃຕ້ກົດໝາຍວ່າດ້ວຍຜູ້ໃຫຍ່ທີ່ດ້ອຍໂອກາດ (Vulnerable Adults Act ) ແລະກົດໝາຍວ່າດ້ວຍການປະຕິບັດທີ່ບໍ່ດີຕໍ່ເຍົາວະຊົນ (Maltreatment of Minors Act).

15. ສິດທິທີ່ຈະໄດ້ຮັບແຈ້ງການລ່ວງໜ້າແລະສົມເຫດຜົນກ່ຽວກັບການປ່ຽນແປງຕ່າງໆດ້ານການບໍລິການຫຼືຄ່າບໍລິການຕ່າງໆ.

16. ສິດທິທີ່ຈະຮູ້ເຫດຜົນຂອງຜູ້ໃຫ້ບໍລິການສຳລັບການຍຸດຕິການໃຫ້ບໍລິການ.

17. ສິດທິທີ່ຈະໄດ້ຮັບແຈ້ງການລ່ວງໜ້າຢ່າງໜ້ອຍສິບວັນກ່ຽວກັບການຍຸດຕິການບໍລິການໂດຍຜູ້ໃຫ້ບໍລິການ, ຍົກເວັ້ນໃນກໍລະນີທີ່:

(i) ຜູ້ຮັບບໍລິການຈັດການປ່ຽນແປງເງື່ອນໄຂຂອງແຜນບໍລິການກັບຜູ້ໃຫ້ບໍລິການເບິ່ງແຍງຢູ່ເຮືອນຢ່າງຊັດເຈນ;
(ii) ຜູ້ຮັບບໍລິການ, ບຸກຄົນທີ່ອາໄສຢູ່ກັບຜູ້ຮັບບໍລິການ, ຫຼືບຸກຄົນອື່ນໆທີ່ສ້າງສະພາບແວດລ້ອມທີ່ເປັນການຂົ່ມເຫັງຫຼືບໍ່ປອດພັຍສໍາລັບບຸກຄົນທີ່ໃຫ້ບໍລິການເບິ່ງແຍງຢູ່ເຮືອນ; ຫຼື
(iii) ເຫດສຸກເສີນຫຼືການປ່ຽນແປງທີ່ສໍາຄັນໃນສະພາບການຂອງຜູ້ຮັບບໍລິການໄດ້ສົ່ງຜົນກະທົບຕໍ່ຄວາມຕ້ອງການດ້ານບໍລິການຊຶ່ງເກີນຈາກແຜນບໍລິການປັດຈຸບັນແລະບໍ່ສາມາດເຮັດໄດ້ຢ່າງປອດພັຍໂດຍຜູ້ໃຫ້ບໍລິການເບິ່ງແຍງຢູ່ເຮືອນ.

18. ສິດທິທີ່ຈະໄດ້ຮັບການປະສານງານການສົ່ງຕໍ່ໃນກໍລະນີທີ່ມີການປ່ຽນຜູ້ໃຫ້ບໍລິການ.

19. ສິດທິທີ່ຈະຮ້ອງທຸກກ່ຽວກັບການບໍລິການທີ່ໄດ້ຮັບ, ຫຼືບໍ່ໄດ້ຮັບ, ແລະການຂາດຄວາມເອື້ອເຟື້ອຫຼືຄວາມເຄົາລົບຕໍ່ຜູ້ຮັບບໍລິການ ຫຼືຕໍ່ຊັບສິນສ່ວນຕົວຂອງຜູ້ຮັບບໍລິການ.

20. ສິດທິທີ່ຈະຮູ້ວິທີການຕິດຕໍ່ກັບບຸກຄົນທີ່ກ່ຽວຂ້ອງກັບຜູ້ໃຫ້ບໍລິການເບິ່ງແຍງຢູ່ເຮືອນຊຶ່ງເປັນຜູ້ຮັບຜິດຊອບໃນການຈັດການບັນຫາຕ່າງໆແລະມີສິດທີ່ຈະໃຫ້ມີການສອບສວນຜູ້ໃຫ້ບໍລິການເບິ່ງແຍງຢູ່ເຮືອນແລະຄວາມພະຍາຍາມໃນການແກ້ໄຂບັນຫາຮ້ອງທຸກຫຼືຂໍ້ຮ້ອງຮຽນ.

21. ສິດທິທີ່ຈະຮູ້ຈັກຊື່ແລະທີ່ຢູ່ຂອງອົງການຂອງຣັຖຫຼືຂອງຄາວຕີ້ເພື່ອ ຕິດຕໍ່ຂໍຂໍ້ມູນຫຼືການຊ່ວຍເຫຼືອຕື່ມ.

22. ສິດທິທີ່ຈະອ້າງສິດທິເຫຼົ່ານີ້ໂດຍສ່ວນຕົວ, ຫຼືອ້າງສິດໂດຍຕົວແທນ ຂອງຜູ້ຮັບບໍລິການຫຼືໂດຍໃຜກໍຕາມໃນນາມຂອງຜູ້ຮັບບໍລິການ, ໂດຍ ປາດສະຈາກການຖືກໂຕ້ຕອບແກ້ແຄ້ນ.

ຖ້າຫາກ ທ່ານມີຄໍາຮ້ອງທຸກກ່ຽວກັບຜູ້ໃຫ້ບໍລິການ ຫຼື ບຸກຄົນທີ່ໃຫ້ບໍລິການດ້ານການເບິ່ງແຍງຢູ່ເຮືອນ,ທ່ານສາມາດໂທຣ, ຂຽນ, ຫຼື ໄປທີ່ຫ້ອງການດູແລເລື້ອງຮ້ອງທຸກດ້ານສະຖານດູແລສຸຂະພາບ, ກະຊວງສາທາລະນະສຸກຣັຖມິນນີໂຊຕາ.ທ່ານຍັງສາມາດຕິດຕໍ່ສູນດູແລເລື້ອງຮ້ອງທຸກດ້ານການເບິ່ງແຍງດູແລລະຍະຍາວ ຫຼື ຫ້ອງການຂອງສູນດູແລເລື້ອງຮ້ອງທຸກສໍາລັບບັນຫາສຸຂະພາບຈິດ ແລະຄວາມພິການທີ່ມີການຊ່ວຍເຫຼືອໄດ້.

**Office of Health Facility Complaints**
(ຫ້ອງການດູແລເລື້ອງຮ້ອງທຸກດ້ານສະຖານດູແລສຸຂະພາບ)

ໂທຣະສັບ: (651) 201-4201 ຫຼື 1-800-369-7994

ແຟກຊ໌: (651) 281-9796

ເວັບໄຊ:

http://www.health.state.mn.us/divs/fpc/ohfcinfo/contohfc.htm

ອີເມວ: health.ohfc-complaints@state.mn.us

ທີ່ຢູ່ທາງໄປສະນີ:

Minnesota Department of Health

Office of Health Facility Complaints
85 East Seventh Place, Suite 300
P.O. Box 64970
St. Paul, Minnesota 55164-0970

**Ombudsman for Long-Term Care**
**(ສູນດູແລເລື້ອງຮ້ອງທຸກດ້ານການເບິ່ງແຍງດູແລລະຍະຍາວ)**

**ໂທຣະສັບ:** (651) 431-2555 ຫຼື 1-800-657-3591

**ແຟກຊ໌:** (651) 431-7452

**ເວັບໄຊ:** http://tinyurl.com/Ombudsman-LTC

**ອີເມວ:** mba.ooltc@state.mn.us

**ທີ່ຢູ່ທາງໄປສະນີ:**

Home Care Ombudsman
Ombudsman for Long-Term Care
PO Box 64971
St. Paul, MN 55164-0971

**Ombudsman for Mental Health and Developmental Disabilities**
**(ສູນດູແລເລື້ອງຮ້ອງທຸກດ້ານສຸຂະພາບຈິດແລະຄວາມພິການທີ່ມີການຊ່ວຍເຫຼືອ)**

**ໂທຣະສັບ:**651-757-1800 ຫຼື 1-800-657-3506

**ແຟກຊ໌:** 651-797-1950 ຫຼື 651-296-1021

**ເວັບໄຊ:** http://mn.gov/omhdd/

**ອີເມວ:** ombudsman.mhdd@state.mn.us

**ທີ່ຢູ່ທາງໄປສະນີ:**

121 7th Place East
Suite 420 Metro Square Building
St. Paul, Minnesota 55101-2117

**ຊື່ຜູ້ໄດ້ຮັບອະນຸຍາດ:________________________________**

**ໂທຣະສັບ: _______________________________________**

**ອີເມວ:_____________________________________________**

**ທີ່ຢູ່:________________________________________________**

**ຊື່/ຕໍາແໜ່ງຂອງບຸກຄົນທີ່ຮັບເລື້ອງບັນຫາ ຫຼື ຄໍາຮ້ອງທຸກ:**

**_______________________________________________**

ເພື່ອຈຸດປະສົງໃນດ້ານຂໍ້ມູນເທົ່ານັ້ນ ແລະບໍ່ຈໍາເປັນຕ້ອງມີຢູ່ໃນຂໍ້ຄວາມຂອງກົດໝາຍວ່າດ້ວຍສິດທິດ້ານການເບິ່ງແຍງຢູ່ເຮືອນ: ຣັຖບັນຍັດຂອງຣັຖມິນນີໂຊຕາ, ມາດຕາ 144A.44 ຂໍ້ຍ່ອຍ 2.

**ການແປພາສາແລະການບັງຄັບໃຊ້ສິດທິ.**

ສິດທິເຫຼົ່ານີ້ຖືກຈັດຕັ້ງຂື້ນເພື່ອຜົນປະໂຫຍດຂອງຜູ້ຮັບບໍລິການທີ່ຮັບເອົາການເບິ່ງແຍງຢູ່ເຮືອນ. **ຜູ້ໃຫ້ບໍລິການເບິ່ງແຍງ ຢູ່ເຮືອນທັງໝົດ, ລວມເຖິງບັນດາຜູ້ທີ່ໄດ້ຮັບການຍົກເວັ້ນພາຍໃຕ້ມາດຕາ 144A.471, ຕ້ອງປະຕິບັດຕາມມາດຕານີ້.** ຄະນະກໍາມາທິການຄວນຈະບັງຄັບໃຊ້ມາດຕານີ້ ແລະຂໍ້ກໍານົດຂອງກົດໝາຍວ່າດ້ວຍສິດທິດ້ານການເບິ່ງແຍງຢູ່ເຮືອນຕໍ່ກັບຜູ້ໃຫ້ບໍລິການເບິ່ງແຍງຢູ່ເຮືອນທີ່ຍົກເວັ້ນຈາກການມີໃບອະນຸຍາດໃນລັກສະນະດຽວກັນກັບບັນດາຜູ້ມີໃບອະນຸຍາດ. ຜູ້ໃຫ້ບໍລິການເບິ່ງແຍງຢູ່ເຮືອນບໍ່ສາມາດຮຽກຮ້ອງ ຫຼື ກໍານົດໃຫ້ຜູ້ຮັບບໍລິການຍອມສະຫຼະສິດທິໃດໆ ເຫຼົ່ານີ້ໂດຍໃຊ້ເປັນເງື່ອນໄຂ

ໃນການຮັບການບໍລິການຕ່າງໆ. ຖະແຫຼງການວ່າດ້ວຍສິດທິນີ້ບໍ່ແທນທີ່ ຫຼື ລົບລ້າງສິດທິອື່ນໆ ແລະສິດທິ ຂັ້ນພື້ນຖານຕ່າງໆ ທີ່ອາດປາກົດ ກ່ຽວພັນກັບຜູ້ຮັບບໍລິການທີ່ກຳລັງຮັບເອົາການບໍລິການເບິ່ງແຍງຢູ່ ເຮືອນ, ບຸກຄົນທີ່ໃຫ້ ບໍລິການເບິ່ງແຍງຢູ່ເຮືອນ, ຫຼື ບັນດາຜູ້ໃຫ້ ບໍລິການທີ່ມີໃບອະນຸຍາດພາຍໃຕ້ມາດຕາ 144A.43 ຫາ 144A.482.